ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 361 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 23/04/2012

# ຂໍ້ຕົກລົງ

## ວ່າດ້ວຍ ວິທີການຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມ ແລະ ການປັບໃໝ ຂອງທະນາຄານທຸລະກິດ

- ອີງຕາມກົດໝາຍ ວ່າດ້ວຍທະນາຄານ ແຫ່ງ ສປປ ລາວ ສະບັບເລກທີ 05/ສພຊ ລົງວັນທີ 14 ຕຸລາ 1999;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 03/ສພຊ ລົງວັນທີ 26 ທັນວາ 2006;
- ອີງຕາມການຄົ້ນຄ້ວາ ແລະ ນຳສະເໜີຂອງກົມຄຸ້ມຄອງທະນາຄານທຸລະກິດ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ ອອກຂໍ້ຕົກລົງ:**

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດວິທີການຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມ ແລະ ການປັບໃໝຂອງທະນາຄານທຸລະກິດຕໍ່ລູກຄ້າທີ່ຄ້າງຊຳລະໜີ້ ເພື່ອຮັບປະກັນສິດຜົນປະໂຫຍດຂອງຜູ້ກູ້ຢືມ ແລະ ທະນາຄານທຸລະກິດ; ຊຸກຍູ້ການສະໜອງທຶນຮອນ ແລະ ການນຳໃຊ້ທຶນເຂົ້າສູ່ການຜະລິດທຸລະກິດ ຢ່າງໂປ່ງໃສ ແລະ ເປັນທຳ.

### ມາດຕາ 2. ນິຍາມຄຳສັບ

1. ເງິນໃຫ້ກູ້ຢືມ ຫມາຍເຖິງຈຳນວນເງິນທີ່ທະນາຄານປ່ອຍກູ້ ໃຫ້ແກ່ບຸກຄົນ ຫຼື ນິຕິບຸກຄົນ ພາຍໃຕ້ຮູບການຕ່າງໆ ເຊັ່ນ: ເງິນກູ້, ເງິນເບີກເກີນບັນຊີ, ເງິນຈ່າຍລ່ວງໜ້າໃຫ້ແກ່ລູກຄ້າ ແລະ ເງິນກູ້ປະເພດອື່ນໆ;
2. ເງິນໃຫ້ກູ້ຢືມເພື່ອການຜະລິດທຸລະກິດ ໝາຍເຖິງເງິນໃຫ້ກູ້ຢືມ ເພື່ອນຳໃຊ້ເຂົ້າໃນການດຳເນີນທຸລະກິດ ເຊັ່ນ: ອຸດສະຫະກຳ, ຫັດຖະກຳ, ກໍ່ສ້າງ, ກະສິກຳ, ການຄ້າ, ການບໍລິການ ແລະ ອື່ນໆ;
3. ເງິນໃຫ້ກູ້ຢືມເພື່ອການຊົມໃຊ້ ໝາຍເຖິງເງິນໃຫ້ກູ້ຢືມແນໃສ່ຕອບສະໜອງຄວາມຕ້ອງການຂອງຜູ້ຊົມໃຊ້ ທີ່ເປັນບຸກຄົນ ຫຼື ຄົວເຮືອນ ເຊັ່ນ: ທີ່ພັກອາໄສ, ເຄື່ອງໃຊ້ໃນຄົວເຮືອນ, ພາຫະນະຮັບ

ໃຊ້, ທຶນການສຶກສາ, ການປິ່ນປົວ ແລະ ອື່ນໆ ຕາມການກຳນົດຂອງທະນາຄານ ແຫ່ງ ສປປ ລາວ;

4. ການຄິດໄລ່ດອກເບ້ຍແບບຫຼຸດຜ່ອນ ແມ່ນການຄິດໄລ່ດອກເບ້ຍ ບົນພື້ນຖານຍອດເຫຼືອໜີ້ເງິນໃຫ້ກູ້ຢືມ (ຕົ້ນທຶນ) ຕົວຈິງ ໃນມື້ທີ່ທະນາຄານດຳເນີນການຄິດໄລ່ດອກເບ້ຍ;
5. ການຄິດໄລ່ດອກເບ້ຍແບບສະເໝີຕົວ ແມ່ນການຄິດໄລ່ດອກເບ້ຍ ບົນພື້ນຖານຈຳນວນເງິນໃຫ້ກູ້ຢືມທັງໝົດທີ່ໄດ້ຮັບອະນຸມັດ, ດອກເບ້ຍດັ່ງກ່າວເມື່ອຖືກຄິດໄລ່ແລ້ວ ຈະນຳໄປບວກໃສ່ຈຳນວນເງິນໃຫ້ກູ້ຢືມທີ່ໄດ້ຮັບອະນຸມັດ ແລ້ວແບ່ງຊຳລະເປັນງວດ ເປັນຈຳນວນເງິນເທົ່າກັນ ຫຼື ຕາມການຕົກລົງລະຫວ່າງທະນາຄານ ແລະ ຜູ້ກູ້ຢືມ ທີ່ໄດ້ກຳນົດໄວ້ໃນສັນຍາເງິນໃຫ້ກູ້ຢືມ;
6. ຈຳນວນເງິນຄ້າງຊຳລະ ໝາຍເຖິງຈຳນວນເງິນ ທີ່ເປັນດອກເບ້ຍ ຫຼື ຕົ້ນທຶນ ຫຼື ທັງດອກເບ້ຍ ແລະ ຕົ້ນທຶນ ທີ່ລູກຄ້າຈະຕ້ອງຊຳລະໃຫ້ທະນາຄານໃນງວດຊຳລະຕາມແຜນຊຳລະ ແຕ່ລູກຄ້າບໍ່ສາມາດຊຳລະຕາມກຳນົດເວລາ ທີ່ກຳນົດໄວ້ໃນສັນຍາ.

## ມາດຕາ 3. ການນຳໃຊ້ວິທີຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມ ຂອງທະນາຄານທຸລະກິດ

ການນຳໃຊ້ວິທີການຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມຂອງທະນາຄານທຸລະກິດ ໃຫ້ປະຕິບັດດັ່ງນີ້:

1) ການຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມ ເພື່ອການຜະລິດທຸລະກິດ ໃຫ້ທະນາຄານທຸລະກິດຄິດໄລ່ແບບຫຼຸດຜ່ອນ. ໃນນີ້ ເງິນໃຫ້ກູ້ຢືມ ເພື່ອການຜະລິດທຸລະກິດ ໄລຍະສັ້ນ 1 ປີ ລົງມາ ທີ່ມີວົງເງິນໃຫ້ກູ້ຢືມບໍ່ເກີນ 15.000.000 ກີບ (ສິບຫ້າລ້ານກີບ) ທະນາຄານສາມາດຄິດໄລ່ແບບຫຼຸດຜ່ອນ ຫຼື ແບບສະເໝີຕົວ ຕາມສັນຍາທີ່ໄດ້ຕົກລົງກັບລູກຄ້າ;
2) ການຄິດໄລ່ດອກເບ້ຍເງິນໃຫ້ກູ້ຢືມ ເພື່ອການຊົມໃຊ້ ທະນາຄານທຸລະກິດສາມາດນຳໃຊ້ວິທີການຄິດໄລ່ແບບຫຼຸດຜ່ອນ ຫຼື ແບບສະເໝີຕົວ ຕາມສັນຍາທີ່ໄດ້ຕົກລົງກັບລູກຄ້າ.

## ມາດຕາ 4. ການປັບໃໝ

ທະນາຄານທຸລະກິດ ສາມາດປັບໃໝລູກຄ້າທີ່ລະເມີດສັນຍາເງິນໃຫ້ກູ້ຢືມໄດ້ ກໍຕໍ່ເມື່ອໄດ້ກຳນົດມາດຕະການປັບໃໝໃນສັນຍາເງິນໃຫ້ກູ້ຢືມ. ການປັບໃໝຕ້ອງປະຕິບັດຕາມລະບຽບທີ່ທະນາຄານທຸລະກິດກຳນົດອອກ. ອັດຕາປັບໃໝສູງສຸດບໍ່ໃຫ້ເກີນ ໜຶ່ງຮ້ອຍຫ້າສິບສ່ວນຮ້ອຍຂອງອັດຕາດອກເບ້ຍທີ່ກຳນົດໄວ້ໃນສັນຍາ.

ວິທີການກຳນົດອັດຕາປັບໃໝ ແລະ ການຄິດໄລ່ເງິນປັບໃໝ ໃຫ້ທະນາຄານທຸລະກິດປະຕິບັດ ດັ່ງນີ້:

$$\text{ອັດຕາປັບໃໝ} \leq (\text{ອັດຕາດອກເບ້ຍໃນສັນຍາເງິນໃຫ້ກູ້ຢືມ} \times 150\%)$$

$$\text{ເງິນປັບໃໝ} = \text{ຈຳນວນເງິນຄ້າງຊຳລະ} \times \text{ຈຳນວນວັນຄ້າງຊຳລະ} \times \frac{\text{ອັດຕາປັບໃໝ}}{360\ \text{ວັນ}}$$

**ມາດຕາ 5. ຄວາມຮັບຜິດຊອບຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ຕ້ອງກຳນົດວິທີການຄິດໄລ່ດອກເບ້ຍ, ການປັບໃໝ, ວິທີການຄິດໄລ່ເງິນປັບໃໝໃນແຕ່ລະກໍລະນີໄວ້ໃນສັນຍາ ແລະ ຕ້ອງແຈ້ງ, ແນະນຳໃຫ້ຜູ້ກູ້ຢືມຊາບ ກ່ອນການເຊັນສັນຍາ. ພ້ອມກັນນັ້ນ ທະນາຄານຕ້ອງສ້າງແຜນການຊຳລະ ຄັດຕິດກັບສັນຍາເງິນກູ້ ເພື່ອເປັນບ່ອນອີງໃນການຕິດຕາມການຊຳລະ.

**ມາດຕາ 6. ຂໍ້ຫ້າມ**

ໃນການດຳເນີນທຸລະກິດສະໜອງເງິນໃຫ້ກູ້ຢືມ ຫ້າມທະນາຄານທຸລະກິດ ຫັກເງິນໃຫ້ກູ້ຢືມເພື່ອຊຳລະດອກເບ້ຍ, ຕົ້ນທຶນເງິນໃຫ້ກູ້ຢືມລ່ວງໜ້າ. ຍົກເວັ້ນກໍລະນີທີ່ໄດ້ຮັບການອະນຸຍາດຈາກທະນາຄານ ແຫ່ງ ສປປ ລາວ.

**ມາດຕາ 7. ມາດຕະການຕໍ່ຜູ້ລະເມີດ**

ທະນາຄານ ແຫ່ງ ສປປ ລາວ ຈະປະຕິບັດມາດຕະການຕໍ່ທະນາຄານທຸລະກິດ ທີ່ລະເມີດຂໍ້ກຳນົດຂອງຂໍ້ຕົກລົງສະບັບນີ້ ເປັນແຕ່ລະກໍນີໜັກ ເບົາ ຕາມຂໍ້ຕົກລົງວ່າດ້ວຍມາດຕະການຕໍ່ການລະເມີດຂອງທະນາຄານທຸລະກິດ ສະບັບເລກທີ 811/ທຫລ ລົງວັນທີ 18 ຕຸລາ 2010 ຫຼື ຕາມຂໍ້ກຳນົດອື່ນໆ ທີ່ທະນາຄານແຫ່ງ ສປປ ລາວ ວາງອອກໃນແຕ່ລະໄລຍະ.

**ມາດຕາ 8. ການຈັດຕັ້ງປະຕິບັດ**

ທະນາຄານທຸລະກິດ ມີໜ້າທີ່ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ. ມອບໃຫ້ກົມຄຸ້ມຄອງທະນາຄານທຸລະກິດ ເປັນຜູ້ຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດ.

**ມາດຕາ 9. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານ ແຫ່ງ ສປປ ລາວ**

ສົມພາວ ໄຟສິດ